ຂັ້ນຕອນການລ້ຽງປາປະສົມປະສານຮ່ວມກັບການລ້ຽງໝູ 18

1 ການເລືອກສະຖານທີ່

- ສະຖານທີ່ລ້ຽງປາປະສົມປະສານຮ່ວມກັບໝູຄວນລ້ຽງຢູ່ໄກບ້ານ ຫຼື ເຮືອນເພາະວ່າຈະມີກິ່ນເໝັນຈາກການລ້ຽງສັດ.
- ສະຖານທີ່ຕ້ອງມີແຫຼ່ງນ້ຳພຽງພໍໃນການລ້ຽງປາ ແລະ ໝູ ເຊັ່ນ: ໃກ້ແມ່ນ້ຳ, ຫ້ວຍ ຫຼື ຊົນລະປະທານ.
- ການລ້ຽງປາຮ່ວມກັບການລ້ຽງໝູ ແມ່ນເພື່ອຫລຸດຕົ້ນທຶນອາຫານໃນການລ້ຽງປາ ເພາະຝຸ່ນຄອກຈາກການລ້ຽງໝູຈະຊ່ອຍໃນການສ້າງອາຫານທຳມະຊາດໃນໜອງປາ ແລະ ເສດອາຫານບາງຢ່າງ ປາສາມາດກິນໂດຍກົງໄດ້.

2 ການສ້າງຄອກໝູ

2.1 ການສ້າງຄອກໝູຢູ່ເທິງໜອງປາ

- ການສ້າງຄອກໝູຢູ່ເທິງໜອງປາ ຈະເຮັດໃຫ້ປາໃຊ້ປະໂຫຍດຈາກຂີ້ໝູ ແລະ ເສດອາຫານຈາກສັດ ເພື່ອເປັນອາຫານປາ ຫຼື ເປັນຝຸ່ນໃຫ້ແກ່ໜອງ.
- ລັກສະນະການສ້າງຄອກ ຢູ່ເທິງໜອງຈະມີຂໍ້ເສຍ ແມ່ນຂີ້ສັດຈະລົງສູ່ໜອງໂດຍກົງ ຈະເຮັດໃຫ້ນ້ຳເນົ່າໄດ້ງ່າຍ.



2.2 ການກະກຽມໜອງເກົ່າ

- ການສ້າງຄອກຢູ່ຂ້າງໜອງປາ, ປາບໍ່ໄດ້ໃຊ້ປະໂຫຍດຈາກຂີ້ສັດ ແລະ ເສດອາຫານໂດຍກົງ,ຈະເອົາເປັນຝຸ່ນຄອກໃສ່ໃນໜອງ ເພື່ອໃຫ້ເກີດອາຫານທຳມະຊາດ.
- ສາມາດຄວບຄຸມຂີ້ສັດ ຫຼື ຂອງເສຍລົງສູ່ໜອງໄດ້ ແລະ ບໍ່ເຮັດໃຫ້ນ້ຳເນົ່າເສຍໄດ້ງ່າຍ.

3 ການກະກຽມໜອງ

- ດູດນ້ຳໜອງໃຫ້ແຫ້ງ ແລະ ຈັບປາທີ່ລ້ຽງ ຫຼື ປາທຳມະຊາດອອກໃຫ້ໝົດ ເພື່ອປ້ອງກັນບໍ່ໃຫ້ມີສັດຕູປາໃນໜອງ.
- ໃສ່ປູນຂາວ ເພື່ອປັບສະພາບຄວາມເປັນກົດ-ເປັນດ່າງຂອງນ້ຳ ແລະ ຂ້າເຊື້ອພະຍາດ, ການຫວ່ານປູນຂາວຕ້ອງໃຫ້ຖົ່ວໜອງໃນປະລິມານ 1 ກິໂລກຼາມ/25ມ², ຫຼັງຈາກນັ້ນໃຫ້ຕາກແດດຢ່າງໜ້ອຍ 2 ອາທິດຂຶ້ນໄປ.
- ໃສ່ຝຸ່ນຄອກ (ຂີ້ສັດແຫ້ງ) ໃຫ້ທົ່ວພື້ນໜອງ ເພື່ອໃຫ້ເກີດອາຫານທຳມະຊາດຈຳພວກໄຮນ້ຳຊະນິດຕ່າງໆ , ໃນອັດຕາສ່ວນ 1.5-3 ກິໂລກຼາມ/25ມ².ຈາກນັ້ນຄວນເຮັດບ່ອນໃສ່ຝຸ່ນຄອກໃນແຈໜອງເພື່ອສະດວກໃນການອານະໄມໜອງ.
- ປ່ອຍນ້ຳເຂົ້າໃສ່ໜອງໃຫ້ໄດ້ລະດັບຄວາມເລິກ 1-1.5 ແມັດ, ປະໄວ້ປະມານ 10-15 ມື້.

4 ການເລືອກແນວພັນໝູ ແລະ ແນວພັນປາມາປ່ອຍ

4.1 ແນວພັນໝູ ແລະ ອັດຕາການປ່ອຍໝູລ້ຽງ

- ແນວພັນໝູທີ່ນຳມາລ້ຽງເຊັ່ນ: ໝູລາດ, ໝູແດງ ແລະ ໝູພັນເປັນຕົ້ນ.
- ແນວພັນໝູຈະນຳມາລ້ຽງຄວນມີລັກສະນະສົມບູນ, ແຂງແຮງດີ, ການຈະເລີນເຕີບໃຫຍ່ໄວ ແລະ ຂະຫຍາຍພັນໃຫ້ລູກຫຼາຍ.
- ການລ້ຽງໝູແມ່ນ 2 ໂຕ/ເນື້ອທີ່ໜອງປາ 200 ມ².

4.2 ແນວພັນປາ ແລະ ອັດຕາການປ່ອຍໝູລ້ຽງ

- ແນວພັນປາທີ່ນຳມາລ້ຽງເຊັ່ນ: ປານິນ, ປາໄນ, ປາປາກ, ປາມະລິການ, ປາຫົວໃຫຍ່ ແລະ ປາເກັດແລບເປັນຕົ້ນ.
- ການປ່ອຍປາລ້ຽງຮ່ວມກັບການລ້ຽງໝູໃນໜອງຂະໜາດ 200 ມ² , ປ່ອຍປາໃນອັດຕາ 3-5 ໂຕ/ມ² ແລະ ການປ່ອຍປາລ້ຽງແມ່ນປ່ອຍໃນ 3 ແບບຕາມຕາຕະລາງລຸ່ມນີ້.

ຮູບແບບ ການປ່ອຍປາ	ຊະນິດແນວພັນປາ (ໂຕ)	ຈຳນວນປາ (ໂຕ)
1.ປ່ອຍປາຊະນິດດຽວ	ປານິນ	1,000
2. ປ່ອຍປາຫຼາຍຊະນິດ ແບບທີ່1	ປານິນ ປາໄນ ປາປາກ ປາຫົວໃຫຍ່ ຫຼື ເກັດແລບ ປາມະລິການ	600 100 150 50 100
3. ປ່ອຍປາຫຼາຍຊະນິດ ແບບທີ່2	ປາຄັດລາ ປາໂຣຣູ ປາມະຣິການ	400 300 300

5 ປະເພດອາຫານ, ວິທີການເຮັດອາຫານ ແລະ ວິທີໃຫ້ອາຫານ

5.1 ປະເພດອາຫານ

ປະເພດຂອງອາຫານປາ ທີ່ມີການລ້ຽງລວມກັນຫຼາຍຊະນິດ ຈະມີປາຊະນິດກິນພືດ, ກິນທັງພືດ ແລະ ຊີ້ນຢູ່ນຳກັນ, ປະເພດອາຫານຈະມີອາຫານສຳເລັດຮູບ ແລະ ອາຫານສົດ, ອາຫານສົດທີ່ສາມາດຫາໄດ້ຕາມທ້ອງຖິ່ນຈະມີ 3 ກຸ່ມເຊັ່ນ:

- ອາຫານກຸ່ມພືດຜັກ ເຊັ່ນ: ຜັກບົ້ງ, ໃບມັນຕົ້ນ, ໃບມັນດ້າງ, ໃບຫຍ້າຢາງ ແລະ ແໜຫາງເຫີນ.
- ອາຫານກຸ່ມແປ້ງ ເຊັ່ນ: ຮຳ, ເຂົ້າປາຍ, ເຂົ້າສານ ແລະ ຫົວມັນຕົ້ນ.
- ອາຫານກຸ່ມຊີ້ນ ເຊັ່ນ: ແມງໄມ້ຊະນິດຕ່າງໆ, ປວກ, ຫອຍ, ກະປູ ແລະ ຂີ້ກະເດືອນ.

5.2 ວິທີການເຮັດອາຫານ

ການເຮັດອາຫານປາໂດຍວິທີງ່າຍໆ ຊຶ່ງມີຫຼາຍວິທີດັ່ງຕໍ່ໄປນີ້:

- ການໃຫ້ອາຫານໂດຍກົງຖ້າເປັນອາຫານທີ່ລະອຽດ ຫຼື ອ່ອນພໍທີ່ປາສາມາດກັດກິນໄດ້ ຫຼື ບົດລະອຽດກ່ອນຈະໃຫ້ປາກິນ.
- ການປະສົມອາຫານ ສາມາດນຳອາຫານທີ່ຊອຍລະອຽດແລ້ວ ມາປະສົມເຂົ້າກັນໂດຍຕື່ມນ້ຳພໍປັ້ນເປັນກ້ອນໄດ້ ຈຶ່ງເອົາໄປໃຫ້ປາກິນ ຖ້າຕ້ອງການໃຫ້ປາກິນງ່າຍ, ຍ່ອຍໄດ້ດີ ແລະ ມີລົດຊາດດີຄວນຕົ້ມອາຫານກຸ່ມແປ້ງກ່ອນ ເມື່ອອາຫານເຢັນລົງຈຶ່ງປະສົມດ້ວຍອາຫານກຸ່ມຊີ້ນ ແລະ ກຸ່ມພືດຜັກ ຈຶ່ງປັ້ນເປັນກ້ອນກ່ອນຈຶ່ງເອົາໄປໃຫ້ປາກິນ.
- ການປະສົມອາຫານສາມາດປະສົມອາຫານທັງ 3 ກຸ່ມ ເຂົ້າກັນໂດຍໃຊ້ກຸ່ມລະ 1 ກິໂລ.



5.3 ວິທີການໃຫ້ອາຫານ

- ຄວນເຮັດບ່ອນໃຫ້ອາຫານປາ ຊຶ່ງຈົມຢູ່ພື້ນນ້ຳພໍປະມານ ແລະ ສາມາດເບິ່ງເຫັນໄດ້ ແລ້ວຈຶ່ງເອົາອາຫານທີ່ປັ້ນເປັນກ້ອນໃຫ້ປາກິນ ແລະ ໃຫ້ທຸກໆວັນ, ອັດຕາການໃຫ້ແມ່ນປະມານ 2-3 ເປີເຊັນຂອງນ້ຳໜັກປາຕໍ່ວັນ, ເວລາແມ່ນໃຫ້ໃນຕອນເຊົ້າ ແລະ ຕອນແລງ.
- ເມື່ອໃຫ້ອາຫານຈຳນວນໜຶ່ງ ໃນບ່ອນໃສ່ອາຫານແລ້ວ ຕ້ອງສັງເກດການກິນອາຫານຂອງປາ ໂດຍສັງເກດຫຼັງຈາກໃຫ້ອາຫານໄປແລ້ວ 30 ນາທີ ຖ້າອາຫານໝົດກໍ່ໃຫ້ເພີ່ມອາຫານຂຶ້ນອີກ, ແຕ່ຖ້າອາຫານເຫຼືອຢູ່ຕ້ອງໃຫ້ລົດລົງໃນວັນຕໍ່ໄປ.

Investing in rural people

ໂຄງການກະສິກຳ ເພື່ອໂພຊະນາການ

ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ: www.afn.gov.la